***"ຈະເປັນແນວໃດຖ້າຫາກຂ້າພະເຈົ້າບໍ່ສາມາດຈ່າຍຄ່າໃຊ້ຈ່າຍໄດ້?"***

ຄອບຄົວຂອງທ່ານສາມາດຖືກປະຕິເສດການບໍລິການແຊກແຊງໃນເບື້ອງຕົ້ນໂດຍອີງຕາມຄວາມບໍ່ສາມາດໃນການຈ່າຍຄ່າປະກັນໄພແບບຈ່າຍຮ່ວມ, ການປະກັນໄພຮ່ວມ ຫຼື ການຫັກອອກທີ່ບໍ່ຕ້ອງເສຍຄ່າພາສີລາຍຮັບຂອງທ່ານ. ການປະກອບແບບຟອມທີ່ທ່ານໄດ້ຮັບຈະກຳນົດຄວາມສາມາດ ຫຼື ຄວາມບໍ່ສາມາດໃນການຈ່າຍຂອງທ່ານ. ຖ້າຫາກພວກເຮົາກຳນົດວ່າທ່ານມີຄວາມສາມາດໃນການຈ່າຍສຳລັບຄ່າໃຊ້ຈ່າຍເຫຼົ່ານີ້, ທ່ານຈະມີຄວາມຮັບຜິດຊອບໃນການຈ່າຍພວກມັນຢ່າງເຕັມສ່ວນ. FRC ແລະ ຜູ້ໃຫ້ບໍລິການຂອງທ່ານຈະຊ່ວຍທ່ານໃນການດຳເນີນການນີ້.

ຄອບຄົວສາມາດຂໍໃຫ້ມີການກຳນົດຄືນໃໝ່ກ່ຽວກັບຄວາມສາມາດໃນການຈ່າຍຄ່າການຈ່າຍປະກັນໄພຮ່ວມກັນ, ການປະກັນໄພຮ່ວມ, ການຫັກອອກໂດຍບໍ່ຕ້ອງເສຍຄ່າພາສີລາຍຮັບ ຫຼື ຄ່າທຳນຽມສຳລັບຄອບຄົວລາຍເດືອນຂອງເຂົາເຈົ້າໃນເວລາໃດກໍໄດ້ທີ່ມີການປ່ຽນແປງກ່ຽວກັບລາຍຮັບ ຫຼື ລາຍຈ່າຍຂອງຄອບຄົວ.

ຖ້າຄອບຄົວລ່າຊ້າກວ່າ 90 ມື້ໃນການຈ່າຍຄ່າການຈ່າຍຮ່ວມກັນ, ການປະກັນໄພຮ່ວມ, ການຫັກອອກໂດຍບໍ່ຕ້ອງເສຍຄ່າພາສີລາຍຮັບ ຫຼື ຄ່າທຳນຽມສຳລັບຄອບຄົວລາຍເດືອນ, ໂຄງການ EI ສາມາດງົດການໃຫ້ບໍລິການຂອງແຜນການ IFSP ຈົນກວ່າຈະມີການພັດທະນາແຜນການຊຳລະເງິນກັບໂຄງການ EI.

***"ຂ້າພະເຈົ້າຄິດວ່າການປະກັນໄພຂອງຂ້າພະເຈົ້າໄດ້ຄຸ້ມຄອງສຳລັບການບໍລິການແຊກແຊງໃນເບື້ອງຕົ້ນ."***

ແຜນປະກັນໄພດ້ານສຸຂະພາບບາງແຜນປະກັນໄພສາມາດຄຸ້ມຄອງການບໍລິການ EI ໄດ້ໃນຂະນະທີ່ແຜນປະກັນໄພອື່ນໆບໍ່ສາມາດ. ໂຄງການ EI ຈະເຮັດວຽກຮ່ວມກັບທ່ານແບບເປັນສ່ວນບຸກຄົນ ເພື່ອກຳນົດການເຂົ້າຮ່ວມທີ່ມີຄ່າໃຊ້ຈ່າຍຂອງຄອບຄົວຂອງທ່ານ, ສຳລັບການບໍລິການຂອງແຜນການ IFSP ຂອງລູກຂອງທ່ານ, ຖ້າມີ. ການເຂົ້າຮ່ວມທີ່ມີຄ່າໃຊ້ຈ່າຍສຳລັບຄອບຄົວ (FCP) ແມ່ນສິ່ງຈຳເປັນ ເພື່ອຮັບປະກັນວ່າເດັກນ້ອຍທີ່ມີສິດທິໄດ້ຮັບທັງໝົດໄດ້ເຂົ້າເຖິງການບໍລິການແລ້ວ.

**ມີຄຳຖາມ ຫຼື ຂໍ້ສົງໄສບໍ?**

ຫົວໜ້າໂຄງການໃນໂຄງການການແຊກແຊງໃນເບື້ອງຕົ້ນ·(EI) ຄວນຈະມີຄວາມສາມາດໃນການຕອບຄຳຖາມໃດໜຶ່ງທີ່ທ່ານມີກ່ຽວກັບການເຂົ້າຮ່ວມທີ່ມີຄ່າໃຊ້ຈ່າຍສຳລັບຄອບຄົວ (FCP) ຫຼື ການບໍລິການແຊກແຊງໃນເບື້ອງຕົ້ນ.



ຜູ້ປະສານງານດ້ານຊັບພະຍາກອນຄອບຄົວຂອງທ່ານ (FRC) ແມ່ນ:

ໂທລະສັບ:______________________________

ໂຄງການ:______________________________

# ການບໍລິການແຊກແຊງໃນເບື້ອງຕົ້ນຂອງວໍຊິງຕັນ

## ການເຂົ້າຮ່ວມທີ່ມີຄ່າໃຊ້ຈ່າຍສຳລັບຄອບຄົວ (FCP)

Department of Early Learning
Early Support for Infants and Toddlers (ESIT)
P.O. Box 40970
Olympia, WA 98504-0970
ໂທລະສັບ: 360.725.3500

DEL 11-019d (8/13)

Family Cost Participation- Laotian

# ການບໍລິການແຊກແຊງໃນເບື້ອງຕົ້ນ (EI) ຂອງວໍຊິງຕັນ

***"ຄ່າໃຊ້ຈ່າຍສຳລັບໂຄງການການແຊກແຊງໃນເບື້ອງຕົ້ນ (EI) ມີຫຍັງແດ່?"***

ບໍ່ມີທາງທີ່ຈະຮູ້ກ່ອນລ່ວງໜ້າວ່າມັນຈະມີຄ່າໃຊ້ຈ່າຍຫຍັງແດ່ສຳລັບການບໍລິການ EI ຂອງລູກຂອງທ່ານ. ພວກເຮົາຈະບໍ່ຮູ້ຂໍ້ມູນນັ້ນຈົນກວ່າພວກເຮົາລົມກັບທ່ານ ແລະ ກຳນົດວ່າທ່ານຕ້ອງການເຫັນຫຍັງແດ່ເກີດຂຶ້ນກັບລູກ ແລະ ຄອບຄົວຂອງທ່ານຕາມຜົນຂອງການເຂົ້າຮ່ວມໃນການແຊກແຊງໃນເບື້ອງຕົ້ນ. ການບໍລິການທີ່ລູກ ແລະ ຄອບຄົວຂອງທ່ານຈະໄດ້ຮັບແມ່ນອີງຕາມລຳດັບຄວາມສຳຄັນ, ຊັບພະຍາກອນ, ຄວາມກັງວົນຂອງຄອບຄົວຂອງທ່ານ ແລະ ຄວາມຕ້ອງການຂອງລູກຂອງທ່ານ. ພວກມັນຈະຖືກກຳນົດໂດຍທ່ານ ແລະ ທີມງານທີ່ທ່ານກຳລັງເຮັດວຽກຮ່ວມກັບ. ການບໍລິການແຊກແຊງໃນເບື້ອງຕົ້ນແມ່ນຖືກເຮັດແບບເປັນສ່ວນບຸກຄົນຕໍ່ກັບເດັກນ້ອຍແຕ່ລະຄົນ ແລະ ແຕ່ລະຄອບຄົວ.



***ມີຄ່າໃຊ້ຈ່າຍສຳລັບການບໍລິການບໍ?***

ໃນພາກສ່ວນ C ຂອງກົດໝາຍວ່າດ້ວຍການສຶກສາສຳລັບບຸກຄົນທີ່ມີຄວາມພິການ (IDEA) ແມ່ນກົດໝາຍຂອງລັດຖະບານກາງທີ່ແນະນຳວິທີການສະໜອງໃຫ້ການບໍລິການແຊກແຊງໃນເບື້ອງຕົ້ນ (EI). IDEA ອະນຸຍາດໃຫ້ມີການເຂົ້າຮ່ວມທີ່ມີຄ່າໃຊ້ຈ່າຍສຳລັບຄອບຄົວ (FCP) ສຳລັບການບໍລິການ EI ບາງບໍລິການ. FCP ລວມເອົາການນຳໃຊ້ການປະກັນໄພຂອງລັດ ຫຼື ເອກະຊົນຂອງຄອບຄົວ. ໃນບາງກໍລະນີ, FCP ຍັງສາມາດລວມເອົາຄ່າທຳນຽມສຳລັບຄອບຄົວອີກດ້ວຍ.

***"ຂ້າພະເຈົ້າຄິດວ່າການບໍລິການແມ່ນບໍ່ໄດ້ເສຍຄ່າ."***

ໃນພາກສ່ວນ C ຂອງກົດໝາຍ IDEA ກຳນົດວ່າ <u>ບາງ</u> ກິດຈະກຳສຳລັບ EI ຖືກສະໜອງໃຫ້ແກ່ຄອບຄົວຂອງທ່ານໂດຍບໍ່ເສຍຄ່າ. ກິດຈະກຳເຫຼົ່ານັ້ນລວມມີ:

- ການຊອກຫາເດັກນ້ອຍ (ອອກຕິດຕໍ່ຊອກຫາເດັກນ້ອຍທີ່ອາດຈະມີສິດໄດ້ຮັບສຳລັບ EI).
- ການຕີລາຄາ ແລະ ການປະເມີນຜົນ (ເພື່ອກຳນົດວ່າເດັກນ້ອຍມີສິດໄດ້ຮັບສຳລັບ EI ຫຼືບໍ່).
- ການປະສານງານການໃຫ້ບໍລິການ (ກິດຈະກຳທີ່ຊອກຫາຊັບພະຍາກອນສຳລັບຄອບຄົວ).
- ການພັດທະນາ ແລະ ການທົບທວນແຜນການບໍລິການສຳລັບຄອບຄົວທີ່ເປັນສ່ວນບຸກຄົນ (IFSP) ກ່ຽວກັບແຜນການສຳລັບຄອບຄົວ.
- ສິດທິສຳລັບຄອບຄົວ (ທີ່ເອີ້ນວ່າ ການຄຸ້ມຄອງທາງດ້ານລະບຽບການ ແລະ ການດຳເນີນການທີ່ເໝາະສົມ).

***"ຂ້າພະເຈົ້າຈະຮູ້ໄດ້ແນວໃດວ່າຈະມີຄ່າໃຊ້ຈ່າຍຫຼືບໍ່?"***

ແບບຟອມທີ່ທ່ານຈະຖືກຖາມເພື່ອປະກອບຈະຊ່ວຍທ່ານໃນການກຳນົດວ່າຈະມີຄ່າໃຊ້ຈ່າຍໃດໜຶ່ງສຳລັບການບໍລິການຫຼືບໍ່. ຖ້າຫາກທ່ານໃຫ້ການຍິນຍອມເຫັນດີໃນແບບຟອມທີ່ຈະນຳໃຊ້ການປະກັນໄພຂອງລັດ ຫຼື ເອກະຊົນຂອງທ່ານ ແລະ ເຫັນດີທີ່ຈະຈ່າຍຄ່າການຈ່າຍຮ່ວມກັນ, ການປະກັນໄພຮ່ວມ ແລະ ການຫັກອອກໂດບບໍ່ຕ້ອງເສຍຄ່າພາສີລາຍຮັບ, ທ່ານຈະບໍ່ຈຳເປັນຕ້ອງສະໜອງໃຫ້ຂໍ້ມູນທາງດ້ານການເງິນໃດໆ. ຖ້າຫາກທ່ານຄິດວ່າທ່ານຈະບໍ່ມີຄວາມສາມາດໃນການຈ່າຍຄ່າປະກັນໄພແບບຈ່າຍຮ່ວມກັນ, ການປະກັນໄພຮ່ວມ ແລະ ການຫັກອອກໂດຍບໍ່ຕ້ອງເສຍຄ່າພາສີລາຍຮັບ, ຂໍ້ມູນທາງດ້ານການເງິນຈຳເປັນທີ່ຈະຕ້ອງຖືກສະໜອງໃຫ້ ເພື່ອກຳນົດວ່າຈະມີຄ່າໃຊ້ຈ່າຍໃດໜຶ່ງສຳລັບການບໍລິການຫຼືບໍ່.

***"ຈະເປັນແນວໃດ ຖ້າຫາກຂ້າພະເຈົ້າເລືອກທີ່ຈະບໍ່ໃຫ້ຂໍ້ມູນກ່ຽວກັບລາຍຮັບ ຫຼື ການປະກັນໄພດ້ານສຸຂະພາບຂອງຂ້າພະເຈົ້າ?"***

ຄອບຄົວມີສິດທິທີ່ຈະບໍ່ສະໜອງໃຫ້ຂໍ້ມູນກ່ຽວກັບລາຍຮັບຂອງເຂົາເຈົ້າ ຫຼື ອະນຸຍາດໃຫ້ໂຄງການສົ່ງໃບເກັບເງິນສຳລັບການປະກັນໄພດ້ານສຸຂະພາບຂອງລັດ ຫຼື ເອກະຊົນຂອງເຂົາເຈົ້າ. ຖ້າຫາກທ່ານເລືອກທີ່ຈະບໍ່ສະໜອງໃຫ້ຂໍ້ມູນກ່ຽວກັບລາຍຮັບ, ໃຫ້ສະໝັກເອົາ Medicaid (ຖ້າມີສິດໄດ້ຮັບ), ຫຼື ອະນຸຍາດໃຫ້ໂຄງການສົ່ງໃບເກັບເງິນສຳລັບການປະກັນໄພຂອງທ່ານ, ທ່ານຈະຖືກປະເມີນຜົນກ່ຽວກັບຄ່າທຳນຽມສຳລັບຄອບຄົວລາຍເດືອນໃນການຈ່າຍສຳລັບການບໍລິການທີ່ຖືກສະໜອງໃຫ້ ເຊິ່ງຂຶ້ນກັບການເຂົ້າຮ່ວມທີ່ມີຄ່າໃຊ້ຈ່າຍສຳລັບຄອບຄົວ (FCP) ໂດຍອີງຕາມຂະໜາດ ແລະ ລາຍຮັບຂອງຄອບຄົວຂອງທ່ານ.

ຂໍ້ມູນທີ່ມີລາຍລະອຽດເພີ່ມເຕີມກ່ຽວກັບຄ່າໃຊ້ຈ່າຍສຳລັບຄອບຄົວທີ່ອາດເປັນໄປໄດ້ແມ່ນຖືກສະໜອງໃຫ້ຢູ່ໃນລະບຽບການຂອງນະໂຍບາຍດ້ານການຊຳລະເງິນ ແລະ ການເສຍຄ່າທຳນຽມທີ່ຜູ້ປະສານງານດ້ານຊັບພະຍາກອນຄອບຄົວ (FRC) ຈະໃຫ້ແກ່ທ່ານ.

**ຂໍ້ມູນກ່ຽວກັບລາຍຮັບ ແລະ ລາຍຈ່າຍຂອງຄອບຄົວແມ່ນເປັນຄວາມລັບ. ມັນບໍ່ສາມາດນຳໄປໃຊ້ໄດ້ຕໍ່ກັບໂຄງການອື່ນໆ (ຂອງລັດ ຫຼື ເອກະຊົນ) ໂດຍບໍ່ມີການຍິນຍອມເຫັນດີທີ່ເປັນລາຍລັກອັກສອນຂອງທ່ານ.**

***"ຈະເປັນແນວໃດ ຖ້າຫາກຂ້າພະເຈົ້າເຄື່ອນຍ້າຍ ຫຼື ໂອນຍ້າຍໄປຍັງໂຄງການການແຊກແຊງໃນເບື້ອງຕົ້ນອື່ນ?"***

ທ່ານຈຳເປັນຈະຕ້ອງສະໜອງໃຫ້ຂໍ້ມູນກ່ຽວກັບຂະໜາດ, ລາຍຮັບ ແລະ ການປະກັນໄພຂອງຄອບຄົວຂອງທ່ານຕໍ່ກັບໂຄງການ EI ໃໝ່ ແລະ ສະໜອງໃຫ້ການຍິນຍອມເຫັນດີໃນການນຳໃຊ້ການປະກັນໄພທີ່ເປັນຂອງລັດ ຫຼື ເອກະຊົນຂອງທ່ານ ເພື່ອຊ່ວຍຈ່າຍສຳລັບການບໍລິການໃນໂຄງການ EI ໃໝ່.